STATE OF WASHINGTON

**DEPARTMENT OF CHILDREN, YOUTH, AND FAMILIES**

CHILD CARE SUBSIDY PROGRAMS (CCSP)

# ຫນັງສືກຳລັງພິຈາຣະນາຂອງຜູ້ເບິ່ງແຍງດູແລຢູ່ໃນເຮືອນ/ພີ່ນ້ອງຜູ້ທີ່ເປັນຄອບຄົວ, ຫມູ່ເພື່ອນ ຫລື ຄົນຂ້າງຄຽງ (FFN)

## Family, Friend and Neighbor (FFN) In-Home / Relative Pending Letter

ວັນທີ: ______________________

______________________

ເລກໂທສູນກາງຕິດຕໍ່ຂອງການຊ່ວຍເຫລືອຄ່າຝາກເດັກນ້ອຍ

______________________

ເລກແຟກຊ໌ສູນກາງຕິດຕໍ່ຂອງການຊ່ວຍເຫລືອຄ່າຝາກເດັກນ້ອຍ

______________________

ເລກຄຳຮ້ອງຂອງລູກຄ້າ

ທ່ານໄດ້ຮ້ອງຂໍເອົາຄວາມຊ່ວຍເຫລືອນຳໂຄງການ Working Connections Child Care ເພື່ອຈະຈ່າຍຄ່າຝາກເດັກນ້ອຍທີ່ຖືກເອົາໃຫ້ໂດຍບໍ່ວ່າຈະແມ່ນ:

1. ຜູ້ບໍ່ແມ່ນພີ່ນ້ອງ (ຫມູ່ເພື່ອນ ຫລື ຄົນຂ້າງຄຽງ) ຜູ້ທີ່ມາເຮືອນຂອງທ່ານເພື່ອຈະໃຫ້ການເບິ່ງແຍງດູແລເດັກນ້ອຍ; ຫລື
2. ພີ່ນ້ອງຜູ້ທີ່ມີເງື່ອນໄຂ (ຄອບຄົວ) ຢູ່ໃນເຮືອນຂອງພີ່ນ້ອງ ຫລື ພີ່ນ້ອງຜູ້ທີ່ມີເງື່ອນໄຂຜູ້ທີ່ມາເຮືອນຂອງທ່ານເພື່ອຈະໃຫ້ການເບິ່ງແຍງດູແລເດັກນ້ອຍ.

**ກະຣຸນາອ່ານ ແລະ ປະຕິບັດຕາມຄຳຊີ້ນຳຢູ່ໃນພາກສ່ວນ 1 ແລະ 2 ຂອງຫນັງສືສະບັບນີ້.**

ພາກສ່ວນ **1.** ກ່ອນການຈ່າຍເງິນຈະຖືກອະນຸຍາດອອກໃຫ້ ແລະ ຜູ້ເບິ່ງແຍງດູແລຈະຖືກອະນຸມັດໃຫ້ໂດຍກົມ **Department of Children, Youth and Families (DCYF)**

ຜູ້ເບິ່ງແຍງດູແລຜູ້ເປັນຄອບຄົວ, ຫມູ່ເພື່ອນ, ແລະ ຄົນຂ້າງຄຽງ **ທຸກໆຄົນ ຕ້ອງ** ມີອາຍຸ 18 ປີ ຫລື ແກ່ກວ່າ. ເພື່ອຈະເລີ້ມຕົ້ນການດຳເນີນການອະນຸມັດ,ຜູ້ເບິ່ງແຍງດູແລຜູ້ເປັນຄອບຄົວ, ຫມູ່ເພື່ອນ, ແລະ ຄົນຂ້າງຄຽງ **ທຸກໆຄົນ** ຕ້ອງເຮັດສິ່ງຕໍ່ລົງໄປນີ້:

**ຂັ້ນຕອນທີ 1.** ຂຽນປະກອບປະວັດຫຍໍ້ຂອງຜູ້ໃຊ້ຢູ່ໃນທາງເຂົ້າແວບໄຊທ໌ຂອງ WA Compass provider portal ຢູ່ທີ່ dcyf.wa.gov/services/early-learning-providers/ffn.

**ຂັ້ນຕອນທີ 2.** ຂຽນປະກອບປະວັດຫຍໍ້ຂອງຜູ້ໃຊ້ຢູ່ໃນ MERIT ຢູ່ທີ່ dcyf.wa.gov/services/earlylearning-profdev/merit.

**ຂັ້ນຕອນທີ 3.** ເມື່ອເວລາຢູ່ໃນ MERIT, ເຮັດການກວດເບິ່ງເບື້ອງຫລັງ Portable Background Check (PBC) ແລະ ຮັບເອົາຄຳແນະນຳວ່າຈະເຮັດວິທີການພິມລາຍມືໃຫ້ສຳເຣັດໄດ້ແນວໃດ. ໃຊ້ເລກນີ້ສຳລັບຄຳຮ້ອງຂໍ PBC ແລະ ການພິມລາຍມື **ຟຣີ**: SU Application Number: ______. **ສຳລັບຄຳຖາມ, ຕິດຕໍ່ຫາ DCYF ໄດ້ທີ່ 1-866-482-4325 ທາງເລືອກ #8.**

**ຂັ້ນຕອນທີ 4.** ສົ່ງເຂົ້າໄປ ຫລື ອັບໂຫລດ ໃບໂກປີຂອງບັດຄວາມປອດພັຍຂອງສັງຄົມທີ່ອ່ານອອກໄດ້ ແລະ ບັດປະຈຳຕົວມີຮູບທີ່ຣັດຖະບານເຮັດອອກໃຫ້, ເຊັ່ນວ່າໃບຂັບຂີ່ຣົດ, ບັດປະຈຳຕົວຂອງຣັດວໍຊິງຕັນ, ຫລື ໃບຫນັງສືເດີນທາງ ເຂົ້າໃສ່ໃນປະຕູແວບຂອງຜູ້ເບິ່ງແຍງດູແລ WA Compass provider portal ໄດ້ທີ່: dcyf.wa.gov/services/early-learning-providers/ffn

**ຂັ້ນຕອນເພີ້ມເຕີມອາດຈະຕ້ອງໄດ້ເຮັດ** ສຳລັບການອະນຸມັດຜູ້ເບິ່ງແຍງດູແລໂດຍອີງຕາມຄວາມສັມພັນຕໍ່ເດັກນ້ອຍ ແລະ ບ່ອນທີ່ການເບິ່ງແຍງດູແລໄດ້ຖືກເອົາໃຫ້.

| **ບໍ່ແມ່ນພີ່ນ້ອງ** | **ພີ່ນ້ອງ** (ຄອບຄົວໂດຍຄວາມສັມພັນທາງສາຍເລືອດ, ການແຕ່ງງານ ຫລື ຄຳສັ່ງຈາກສານ) |
|---|---|
| ຜູ້ເບິ່ງແຍງດູແລບໍ່ມີສາຍສັມພັນຕໍ່ເດັກນ້ອຍ ແລະ ເປັນ:<br>a) ຫມູ່ເພື່ອນ; ຫລື<br>b) ຄົນຂ້າງຄຽງຂອງພໍ່ແມ່. | ຜູ້ເບິ່ງແຍງດູແລ ມີສາຍສັມພັນຕໍ່ເດັກນ້ອຍ ແລະ ເປັນ:<br>a) ອ້າຍເອື້ອຍນ້ອງຄົງຜູ້ໃຫຍ່ຜູ້ທີ່ອາສັຍຢູ່ນອກເຮືອນຂອງເດັກນ້ອຍ;<br>b) ປູ່ຍ່າຕາຍາຍ (ພໍ່ເຖົ້າທວດແມ່ເຖົ້າທວດ, ທວດສອງຊັ້ນ) ;<br>c) ປ້າ ຫລື ລຸງ (ປ້າລຸງທວດ ແລະ ທວດສອງຊັ້ນອີກ) ; ຫລື<br>d) ຄອບຄົວຄົນອື່ນໆໂດຍຄວາມສັມພັນທາງເລືອດ, ການແຕ່ງງານ ຫລື ຄຳສັ່ງຂສານ. |
| ການຝາກເດັກນ້ອຍໄດ້ຖືກອະນຸຍາດຢູ່ໃນເຮືອນຂອງ **ເດັກນ້ອຍ** ເທົ່ານັ້ນ | ການຝາກເດັກນ້ອຍໄດ້ຖືກອະນຸຍາດຢູ່ໃນເຮືອນຂອງ **ຜູ້ເບິ່ງແຍງດູແລ** ຫລື ເຮືອນຂອງ **ເດັກນ້ອຍ** |
| ບໍ່ມີສິ່ງຕ້ອງການເພີ້ມເຕີມແນວໃດສຳລັບການອະນຸມັດເບື້ອງຕົ້ນ – ຈົ່ງເບິ່ງ **ພາກສ່ວນ 2** ສຳລັບກົດກຳນົດສຳລັບເງື່ອນໄຂຮັບເອົາຕໍ່ໄປ | ຖ້າຫາກວ່າການເບິ່ງແຍງດູແລແມ່ນຢູ່ໃນ **ເຮືອນຂອງຜູ້ເບິ່ງແຍງດູແລ,** ຜູ້ເບິ່ງແຍງດູແລຕ້ອງບອກໃຫ້ຄົນທຸກໆຄົນອາຍຸ 16 ປີ ແລະ ແກ່ກວ່າ, ຜູ້ທີ່ອາສັຍຢູ່ນຳພີ່ນ້ອງຍັງຈະຕ້ອງໄດ້ເຮັດຂັ້ນຕອນທີ 1, 2, ແລະ 3 ຢູ່ຂ້າງເທິງນີ້ໃຫ້ແລ້ວອີກຄືກັນ. |

**ພາກສ່ວນ 2.** ຫລັງຈາກການອະນຸມັດໂດຍ **DCYF.** ການຈ່າຍເງິນຈະບໍ່ເລີ້ມຕົ້ນຈົນກວ່າວັນທີທີ່ຜູ້ເບິ່ງແຍງດູແລຂອງທ່ານຈະຖືກອະນຸມັດ ຫລື ການເບິ່ງແຍງດູແລເລີ້ມຕົ້ນ, ບໍ່ວ່າອັນໃດມາຮອດມາຮອດນຳຫລັງ. **WAC 110-15-0125**

ເພື່ອຍັງຈະມີເງື່ອນໄຂໄດ້ຮັບການຈ່າຍເງິນຢູ່, ຜູ້ເບິ່ງແຍງດູແລທີ່ບໍ່ແມ່ນພີ່ນ້ອງ (ຫມູ່ເພື່ອນ ແລະ ຄົນຂ້າງຄຽງ) ແລະ ແມ່ນພີ່ນ້ອງທຸກໆຄົນຕ້ອງ:

A. ເຮັດໃຫ້ແລ້ວ, ພາຍໃນເກົ້າສິບ (90) ວັນທຳອິດຂອງວັນທີເລີ້ມຕົ້ນຈ່າຍເງິນ, ລະບົບການຕິດຕາມນຳການມາເຮັດວຽກທາງເອເລກໂຕຣນິກຂອງ DCYF. ເບິ່ງລາຍລະອຽດກ່ຽວກັບການຝຶກຝົນໄດ້ທີ່ dcyf.wa.gov/services/early-learning-providers/electronic-attendance-system/trainingຫລືໃຫ້ລະບົບການຕິດຕາມນຳການມາເຮັດວຽກທາງເອເລກໂຕຣນິກຂອງທ່ານຖືກອະນຸມັດໂດຍ DCYF ຢູ່ທີ່ dcyf.wa.gov/services/early-learning-providers/electronic-attendance-system/training.

B. ໃຊ້ລະບົບການຕິດຕາມນຳການມາເຮັດວຽກທາງເອເລກໂຕຣນິກທຸກໆວັນເພື່ອຈະຕີເວລາເລີ້ມຕົ້ນ ແລະ ເວລາເຊົາເຮັດວຽກເຂົ້າໃສ່ສຳລັບການເບິ່ງແຍງດູແລທີ່ຖືກເອົາໃຫ້ເດັກນ້ອຍແຕ່ລະຄົນ ແລະ ສົ່ງບັນທຶກເອເລກໂຕຣນິກໄປຫາ DCYF ໃນແຕ່ລະເດືອນໂດຍການໃຊ້ລະບົບເອເລກໂຕຣນິກ.

C. ເກັບຮັກສາລາຍລະອຽດຂອງເຂົາເຈົ້າໄວ້ຢູ່ໃນ WA Compass provider portal ແລະ MERIT ໃຫ້ຖືກຕ້ອງທັນນຳການປ່ຽນແປງກ່ຽວກັບຊື່ຕາມກົດຫມາຍຂອງເຂົາເຈົ້າ, ທີ່ຢູ່, ອີແມລ໌ ແລະ ເລກໂທລະສັບຂອງເຂົາເຈົ້າ. (**ພາກສ່ວນ 1:** ຂັ້ນຕອນທີ 1 ແລະ 2 ຢູ່ໃນຫນ້າທຳອິດ)

D. ເກັບຮັກສາໃຫ້ການກວດເບິ່ງເບື້ອງຫລັງຂອງເຂົາເຈົ້າໃຫ້ຖືກຕ້ອງນຳປັດຈຸບັນ (ຕ້ອງໄດ້ເຮັດທຸກໆ 3 ປີ) (**ພາກສ່ວນ 1:** ຂັ້ນຕອນທີ 3 ຢູ່ໃນຫນ້າທຳອິດ)

ສິ່ງຕໍ່ລົງໄປນີ້ແມ່ນ **ກົດກຳນົດຂອງເງື່ອນເຮັບເອົາຕໍ່ໄປເພີ້ມເຕີມ** ສຳລັບຜູ້ເບິ່ງແຍງດູແລອີງຕາມຄວາມສຳພັນຕໍ່ເດັກນ້ອຍ ແລະ ບ່ອນທີ່ການເບິ່ງແຍງດູແລໄດ້ຖືກເອົາໃຫ້.

ຜູ້ເບິ່ງແຍງດູແລ **ບໍ່ແມ່ນພີ່ນ້ອງ**
ການຝາກເດັກນ້ອຍ **ໄດ້ຖືກອະນຸຍາດ** ຢູ່ໃນ **ເຮືອນຂອງເດັກນ້ອຍເທົ່ານັ້ນ**

1. ພາຍໃນ 90 ວັນທຳອິດຂອງວັນທີເລີ້ມຕົ້ນຂອງການຈ່າຍເງິນ, ເຮັດໃຫ້ແລ້ວ:
   a) ການຝຶກຝົນເລື່ອງສຸຂະພາບ ແລະ ຄວາມປອດພັຍຂອງ DCYF ຫລື ມີຫລັກຖານຂອງການຍົກເວັ້ນຂອງ DCYF ໂດຍອີງຕາມກົດຫມາຍ WAC 110-16-0025(2)(b). ການຝຶກຝົນເລື່ອງສຸຂະພາບ ແລະ ຄວາມປອດພັຍຂອງ DCYF ສາມາດຖືກພົບເຫັນໄດ້ທາງອອນລາຍນ໌ຢູ່ທີ່: dcyf.wa.gov/services/early-learning-providers/ffn;
   b) ສຳເຮັດການຝຶກຝົນເລື່ອງການປະຖົມພະຍາບານເດັກທາຣົກ, ເດັກນ້ອຍ, ແລະ ຜູ້ໃຫຍ່ ແລະ ການຊ່ວຍຊີວິດດ້ວຍການເປົ່າລົມເຂົ້າທາງປາກ (CPR).
   c) ຕີວັນທີຂອງການສຳເຮັດການຝຶກຝົນ CPR/First Aid ເຂົ້າໃສ່ໃນ MERIT ຢູ່ທີ່ dcyf.wa.gov/services/earlylearning-profdev/merit. ສົ່ງເຂົ້າໄປ ແລະ ອັບໂຫລດຫລັກຖານຂອງການຝຶກຝົນ CPR/First Aid (ບັດ, ໃບປະກາດສະນີຍະບັດ, ຫລື ຫນັງສືຈາກອາຈານສອນ) ໄປຫາ DCYF ໄດ້ທີ່ dcyf.wa.gov/services/early-learning-providers/ffn
2. ພາຍໃນ 45 ວັນ ຂອງການສຳເຮັດການຝຶກຝົນຢູ່ຂ້າງເທິງນີ້, ສົ່ງມາໃຫ້ DCYF ໃບສັນຍາສຸຂະພາບ ແລະ ຄວາມປອດພັຍຢູ່ໃນເຮືອນຂອງ WCCC ທີ່ຜູ້ເບິ່ງແຍງດູແລ ແລະ ທ່ານໄດ້ເຊັນຊື່ໃສ່ແລ້ວ, ພໍ່ແມ່ຊຶ່ງໄດ້ຊີ້ບອກວ່າເຂົາເຈົ້າໄດ້ເວົ້າລົມ ແລະ ກວດເບິ່ງຄືນໃນຫົວເລື່ອງ ແລະ ເລື່ອງທີ່ກ່ຽວຂ້ອງທຸກໆເລື່ອງທີ່ຖືກບັນຈຸຢູ່ໃນໃບສັນຍາ.
3. ເຂົ້າຮ່ວມໃນການຢ້ຽມຢາມປະຈຳປີໃນເຮືອນຂອງເດັກນ້ອຍນຳຜູ້ຊ່ຽວຊານຍົກເວັ້ນອະນຸຍາດ DCYF; ແລະ, ເມື່ອມີເວລາວ່າງ, ທ່ານ, ພໍ່ແມ່. ຈຸດປະສົງຂອງການຢ້ຽມຢາມແມ່ນເພື່ອຈະຮັບປະກັນວ່າທ່ານ ແລະ ຜູ້ເບິ່ງແຍງດູແລໄດ້ປະຕິບັດສອດຄ່ອງນຳກົດກຳນົດສຸຂະພາບ ແລະ ຄວາມປອດພັຍ, ສັງເກດເບິ່ງສະພາບແວດລ້ອມຂອງການເບິ່ງແຍງດູແລເດັກນ້ອຍ ແລະ ປະຕິກິຣິຍາຂອງຜູ້ເບິ່ງແຍງດູແລນຳເດັກນ້ອຍ, ແລະ ເວົ້າລົມເລື່ອງພາກປະຕິບັດສຸຂະພາບ ແລະ ຄວາມປອດພັຍ.
4. ສຳເຮັດການຝຶກຝົນສຸຂະພາບ ແລະ ຄວາມປອດພັຍ DCYF ຢ່າງຫນ້ອຍທຸກໆປີ.

ຜູ້ເບິ່ງແຍງດູແລ **ແມ່ນພີ່ນ້ອງ** ທີ່ມີເງື່ອນໄຂ
ການຝາກເດັກນ້ອຍແມ່ນຢູ່ໃນເຮືອນຂອງ **ຜູ້ເບິ່ງແຍງດູແລ** ຫລື ເຮືອນຂອງ **ເດັກນ້ອຍ**

1. ເມື່ອເວລາການຝາກເດັກນ້ອຍເກີດຂຶ້ນ ຢູ່ໃນເຮືອນຂອງຜູ້ເບິ່ງແຍງດູແລທີ່ເປັນພີ່ນ້ອງ, ບຸກຄົນອາຍຸ 16 ປີ ແລະ ແກ່ກວ່າຜູ້ທີ່:
   a) ອາສັຍຢູ່ນຳຜູ້ເບິ່ງແຍງດູແລທີ່ເປັນພີ່ນ້ອງຕ້ອງຮັກສາໃຫ້ການກວດເບິ່ງເບື້ອງຫລັງຂອງເຂົາເຈົ້າຖືກຕ້ອງນຳປັດຈຸບັນ (ຕ້ອງໄດ້ເຮັດທກໆ 3 ປີ) .
   b) ມີແຜນທີ່ຈະອາສັຍຢູ່ນຳຜູ້ເບິ່ງແຍງດູແລທີ່ເປັນພີ່ນ້ອງ, ຕ້ອງເຮັດການກວດເບິ່ງເບື້ອງຫລັງຂອງເຂົາເຈົ້າໃຫ້ແລ້ວກ່ອນທີ່ຈະຍ້າຍເຂົ້າມາຢູ່ນຳຜູ້ເບິ່ງແຍງດູແລ.
2. ເຂົ້າຮ່ວມນຳໃນການໂທລະສັບຫາກັນດ້ານຄວາມຊ່ວຍເຫລືອທາງເຕັກນິກພາຍໃນເກົ້າສິບວັນທຳອິດຂອງວັນທີເລີ້ມຕົ້ນຂອງການຈ່າຍເງິນ ແລະ ທຸກໆປີຫລັງຈາກການໂທລະສັບເທື່ອທຳອິດ. ກົດກຳນົດອັນນີ້ ກ່ຽວຂ້ອງນຳຜູ້ເບິ່ງແຍງດູແລທີ່ແມ່ນພີ່ນ້ອງເທົ່ານັ້ນຜູ້ທີ່ **ບໍ່ແມ່ນ:**
   a) ອ້າຍເອື້ອຍນ້ອງຄືງໆຜູ້ທີ່ອາສັຍຢູ່ນອກເຮືອນຂອງເດັກນ້ອຍ;
   b) ພໍ່ເຖົ້າແມ່ເຖົ້າ ຫລື ພໍ່ເຖົ້າທວດແມ່ເຖົ້າທວດ;
   c) ປ້າ ຫລື ລູງ.

Child Care Aware ເອົາລາຍລະອຽດ ແລະ ການສົ່ງຕໍ່ໄປຫາໃຫ້ຟຣີ, ໂດຍບໍ່ລຳອຽງສຳລັບຄອບຄົວທີ່ກຳລັງຊອກຫາບ່ອນຝາກເດັກນ້ອຍທີ່ມີໃບອະນຸຍາດທີ່ມີຄຸນນະພາບສູງ. ເພື່ອຈະຕິດຕໍ່ຫາ Child Care Aware ໂທໄປທີ່ເລກ 1-800-446-1114 ຫລືທາງອອນລາຍນ໌ໄດ້ທີ່ [childcareaware.org](http://childcareaware.org).

ເພື່ອຈະຊອກເບິ່ງສະພາບການຂອງການກວດເບິ່ງເບື້ອງຫລັງຂອງບ່ອນຝາກເດັກນ້ອຍທີ່ມີໃບອະນຸຍາດ, ປະວັດຂອງການອອກໃບອະນຸຍາດ, ລາຍງານກ່ຽວກັບການຄວບຄຸມເບິ່ງນຳ, ພາສາທີ່ເວົ້າໄດ້ ແລະ ຫລາຍຢ່າງຫລາຍແນວອີກໄດ້ຢູ່ທີ່ **Child Care Check** ຢູ່ທີ່ [findchildcarewa.org](http://findchildcarewa.org)**.**

ທ່ານສາມາດຮຽນຮູ້ຖ້າຫາກວ່າການຈະເຣີນເຕີບໂຕຂອງລູກນ້ອຍ ຫລື ລູກຂອງທ່ານໄປຖືກທາງ ຫລື ບໍ່ ຫລື ຖ້າຫາກວ່າເຂົາເຈົ້າຕ້ອງການການຝຶກແອບເພີ້ມເຕີມຕື່ມຫນ້ອຍນຶ່ງເພື່ອຈະຕຽມພ້ອມທີ່ຈະເຂົ້າໂຮງຮຽນ. ເພື່ອຈະເຮັດອັນນີ້,ທ່ານສາມາດຂຽນຄຳຖາມການກວດກັ່ນເບິ່ງການຈະເຣີນເຕີບໂຕຂອງເດັກນ້ອຍຟຣີໂດຍການໂທໄປຫາ Family Help Hotline ໄດ້ທີ່ເລກ 1-800-322-2588 ຫລື ໄປຫາແວບໄຊທ໌ຂອງ Parent Help 123 ໄດ້ທີ່ [parenthelp123.org/child-development/help-me-grow-washington](http://parenthelp123.org/child-development/help-me-grow-washington) ເພື່ອຈະຮູ້ຈັກກ່ຽວກັບມັນເພີ້ມເຕີມອີກ.

ເດັກນ້ອຍມີສິດທິມະນຸດສະທັມພື້ນຖານທີ່ຈະຢູ່ຢ່າງປອດພັຍ, ການກົດຂີ່ຂົ່ມເຫັງ ແລະ ການປ່ອຍປະລະເລີຍຈະຂົ່ມຂູ່ຄວາມປອດພັຍຂອງເດັກນ້ອຍໂດຍການປະເຂົາເຈົ້າໃຫ້ຕົກຢູ່ໃນການສ່ຽງອັນຕະລາຍຕໍ່ການບາດເຈັບທາງດ້ານຮ່າງກາຍ ແລະ ຈິດໃຈ ແລະ ແມ້ກະທັ້ງການເສັຽຊີວິດ. ຖ້າຫາກວ່າທ່ານມີຄວາມສົງສັຍວ່າເດັກນ້ອຍເປັນຜູ້ເຄາະຮ້າຍຂອງການກົດຂີ່ຂົ່ມເຫັງ ຫລື ການປ່ຽຍປະລະເລີຍ, ຈົ່ງໂທຫາ DCYF ເລກໂທຟຣີໄດ້ທີ່ເລກ 1-866-END-HARM (1-866-363-4276).

**ກະຣຸນາໂທຫາສູນກາງຕິດຕໍ່ຂອງການຊ່ວຍເຫລືອເດັກນ້ອຍຖ້າຫາກວ່າທ່ານມີຄຳຖາມແນວໃດ ກ່ຽວກັບຂັ້ນຕອນຕໍ່ໄປ ຫລື ເງື່ອນໄຂຮັບເອົາຕໍ່ໄປຂອງທ່ານໄດ້ທີ່ເລກ 1-844-626-8687.**

**ຖ້າຫາກວ່າຜູ້ເບິ່ງແຍງດູແລເດັກນ້ອຍຂອງທ່ານມີຄຳຖາມແນວໃດກ່ຽວກັບການດຳເນີນການອະນຸມັດ ແລະ ກົດກຳນົດ ໃຫ້ເຂົາເຈົ້າຕິດຕໍ່ໄປຫາຜູ້ຊ່ຽວຊານການຍົກເວັ້ນໃບອະນຸຍາດຂອງເຂົາເຈົ້າໄດ້ທີ່ເລກ: 1-866-482-4325 #8 ຫລື ສົ່ງອີແມລ໌ໄປທີ່ [dcyf.ffn@dcyf.wa.gov](mailto:dcyf.ffn@dcyf.wa.gov).**